ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ເລກທີ 1332/ກງ

ນະຄອນຫລວງວຽງຈັນ,ວັນທີ 17 JUN 2009

# ຄຳສັ່ງແນະນຳ
# ຂອງລັດຖະມົນຕີວ່າການກະຊວງການເງິນ
# ກ່ຽວກັບການຄຸ້ມຄອງກິດຈະການຫວຍ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ ສະບັບເລກທີ 80/ນຍ, ລົງວັນທີ 28/2/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 70/ນຍ, ລົງວັນທີ 01/07/2008 ວ່າດ້ວຍການຄຸ້ມຄອງກິດຈະການຫວຍ.
- ອີງຕາມ ລັດຖະບັນຍັດ ຂອງປະທານປະເທດ ແຫ່ງ ສ ປ ປ ລາວ ສະບັບເລກທີ 01/ສປປ, ລົງວັນທີ 09/08/2002 ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ.
- ອີງຕາມ ແຈ້ງການຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 1536 / ຄລບ, ລົງວັນທີ 02 ກັນຍາ 2008.
- ອີງຕາມ ການເຫັນດີເປັນເອກະພາບ ຂອງກອງປະຊຸມ ສະຫລຸບວຽກງານຫວຍພັດທະນາ ທົ່ວປະເທດ ຄັ້ງທີ III ວັນທີ 16-17/02/2009.

ເພື່ອເຮັດໃຫ້ກິດຈະການຫວຍ ແລະ ກິດຈະການທີ່ຄ້າຍຄືຫວຍທຸກປະເພດໄດ້ເຄື່ອນໄຫວສອດຄ່ອງກັບລະບຽບກົດໝາຍ ແລະ ຄຸ້ມຄອງຢ່າງລວມສູນ ຂອງກະຊວງການເງິນ ເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

**ລັດຖະມົນຕີວ່າການກະຊວງການເງິນ ອອກຄຳສັ່ງແນະນຳດັ່ງນີ້ :**

## I. <u>ຈຸດປະສົງ</u>

ຄຳສັ່ງແນະນຳສະບັບນີ້ ໄດ້ກຳນົດລະບຽບຫລັກການ, ການຈັດຕັ້ງ,ການເຄື່ອນໄຫວກິດຈະການຫວຍ ແລະ ກິດຈະການທີ່ຄ້າຍຄືກັນກັບຫວຍທຸກປະເພດເພື່ອແນໃສ່ຄຸ້ມຄອງຢ່າງເປັນລະບົບ, ລວມສູນ ແລະ ຖືກຕ້ອງ ຕາມລະບຽບກົດໝາຍ.

ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານວັດຖຸ ແລະ ຈິດໃຈໃນການຜ່ອນຄາຍອາລົມໃຫ້ແກ່ຜູ້ທີ່ ມັກສ່ຽງໂຊກຊີງລາງວັນກັບຫວຍພັດທະນາທຸກປະເພດ, ເປັນການປະກອບສ່ວນເກັບເອົາເງິນສົດສ່ວນໜຶ່ງ ທີ່ຈໍລະຈອນຢູ່ໃນທ້ອງຕະຫລາດ ກັບຄືນສູ່ລະບົບການເງິນ - ທະນາຄານ ແລະ ຊ່ວຍໜູນໃນການສ້າງລາຍຮັບໃຫ້ແກ່ງົບປະມານ ພ້ອມທັງຈຳກັດການພະນັນຕ່າງໆ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

ເພື່ອປະກອບສ່ວນສ້າງວຽກເຮັດງານທຳ ແລະລາຍໄດ້ໃຫ້ແກ່ປະຊາຊົນລາວໃນຂອບເຂດທົ່ວປະເທດ ຕາມຄວາມເໝາະສົມ.

## II. ການຄຸ້ມຄອງກິດຈະການຫວຍ

ກະຊວງການເງິນເປັນຜູ້ຄຸ້ມຄອງກິດຈະການຫວຍ ແລະ ກິດຈະການຄ້າຍຄືຫວຍທຸກປະເພດ ແລະ ໄດ້ສ້າງຕັ້ງລັດວິສາຫະກິດຫວຍພັດທະນາຂື້ນ ເພື່ອຄຸ້ມຄອງ ແລະ ເຄື່ອນໄຫວທຸລະກິດພິມ - ຈຳໜ່າຍໃບຫວຍເອກະພາບທົ່ວປະເທດ.

### 1. ການຄຸ້ມຄອງ.

1.1- ກະຊວງການເງິນເປັນຜູ້ຄຸ້ມຄອງກິດຈະການຫວຍ ຕາມດຳລັດເລກທີ 80/ນຍ, ລົງວັນທີ 28/2/2007 , ມາດຕາ 6, ຂໍ້ 4 ແລະ ມອບໃຫ້ລັດວິສາຫະກິດ ຫວຍພັດທະນາ ເປັນຜູ້ດຳເນີນກິດຈະການ.

1.2- ລັດວິສາຫະກິດ ຫວຍພັດທະນາ ແມ່ນວິສາຫະກິດຂອງລັດ ທີ່ຂື້ນກັບກະຊວງການເງິນ ດຳເນີນທຸລະກິດເປັນຖານະນິຕິບຸກຄົນ.

1.3- ສຳລັບຢູ່ແຂວງ, ນະຄອນຫລວງ ( ພະແນກການເງິນແຂວງ, ພະແນກການເງິນນະຄອນຫລວງ, ຫ້ອງການການເງິນເມືອງ ) ມີໜ້າທີ່ຄຸ້ມຄອງການເຄື່ອນໄຫວຂອງກິດຈະການຫວຍໃຫ້ຖືກຕ້ອງຕາມກົດໝາຍ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການ ທີ່ມາເຄື່ອນໄຫວຈຳໜ່າຍຫວຍພັດທະນາ ໃນຂອບເຂດທີ່ຕົນຮັບຜິດຊອບ, ເກັບພັນທະອາກອນຕ່າງໆ ຈາກຕົວແທນຈຳໜ່າຍ ມອບເຂົ້າງົບປະມານ ແລະ ຫ້າມບໍ່ໃຫ້ເກັບພັນທະເພີ້ມນອກລະບຽບກົດໝາຍ ໄດ້ກຳນົດໄວ້.

### 2. ການອອກເລກລາງວັນຫວຍ.

2.1 ການອອກເລກລາງວັນຫວຍໃນແຕ່ລະຄັ້ງ ຕ້ອງມີຄະນະກຳມະການຄຸ້ມຄອງການອອກເລກລາງວັນເຂົ້າຮ່ວມເປັນສັກຂີພະຍານພ້ອມທັງບັນທຶກ ແລະເຊັນຢັ້ງຢືນຜົນການອອກເລກລາງວັນ ແລະມູນຄ່າຂາຍໄດ້, ຖືກລາງວັນເປັນແຕ່ລະປະເພດຫວຍໄວ້ເປັນຫລັກຖານ.

2.2. ຄະນະກຳມະການຄຸ້ມຄອງການອອກເລກລາງວັນ ຂັ້ນສູນກາງ ແມ່ນລັດຖະມົນຕີວ່າການກະຊວງການເງິນ ເປັນຜູ້ແຕ່ງຕັ້ງຕາມການຄົ້ນຄ້ວາ ແລະ ເຫັນດີຂອງພາກສ່ວນທີ່ກ່ຽວຂ້ອງ ຊື່ງປະກອບມີ

- ຜູ້ຕາງໜ້າ ກະຊວງການເງິນ ( ກົມຄຸ້ມຄອງການເງິນລັດວິສາຫະກິດ) 1 ທ່ານ
- ຜູ້ຕາງໜ້າ ສະພາແຫ່ງຊາດ 1 ທ່ານ
- ຜູ້ຕາງໜ້າ ສຳນັກງານນາຍົກລັດຖະມົນຕີ 1 ທ່ານ
- ຜູ້ຕາງໜ້າ ກະຊວງຍຸຕິທຳ 1 ທ່ານ
- ຜູ້ຕາງໜ້າ ກະຊວງປ້ອງກັນຄວາມສະຫງົບ (ຕຳຫຼວດເສດຖະກິດ) 1 ທ່ານ
- ຜູ້ຕາງໜ້າ ກະຊວງຖະແຫລງຂ່າວ- ວັດທະນະທຳ 1 ທ່ານ
- ຜູ້ຕາງໜ້າ ສູນກາງແນວລາວສ້າງຊາດ 1 ທ່ານ

ຄະນະກຳມະການດັ່ງກ່າວມີສິດ ແລະ ໜ້າທີ່ດັ່ງນີ້ :

- ເຂົ້າຮ່ວມພິທີການອອກເລກລາງວັນໃນແຕ່ລະຄັ້ງ ທີ່ລັດວິສາຫະກິດຫວຍພັດທະນາໄດ້ຈັດຂື້ນ.
- ກວດກາເບິ່ງຄວາມກຽມພ້ອມຂອງເຄື່ອງມືທີ່ນຳໃຊ້ອອກເລກລາງວັນໃນແຕ່ລະຄັ້ງ.
- ຕິດຕາມເບິ່ງການອອກເລກລາງວັນໃນແຕ່ລະຄັ້ງ.
- ກວດກາ ແລະ ເຊັນຢັ້ງຢືນຜົນຂອງການອອກເລກລາງວັນຕົວຈິງໃນແຕ່ລະຄັ້ງ.

- ຖະແຫຼງຕໍ່ສື່ມວນຊົນໃນເວລາທີ່ສັງຄົມມີຄວາມສົນໃຈບັນຫາຕ່າງໆ ທີ່ພົວພັນເຖິງການປະຕິບັດໜ້າທີ່ຂອງຄະນະກຳມະການ.

2.3.ຄະນະກຳມະການຄຸ້ມຄອງການອອກເລກລາງວັນຂັ້ນແຂວງ (ທ້ອງຖິ່ນ) ແມ່ນ ເຈົ້າແຂວງ, ເຈົ້າຄອງ ນະຄອນຫລວງ ເປັນຜູ້ແຕ່ງຕັ້ງຕາມການຄົ້ນຄ້ວາ ແລະເຫັນດີຂອງພາກສ່ວນທີ່ກ່ຽວຂ້ອງ ຊຶ່ງປະກອບມີ :

| | |
|---|---|
| - ຜູ້ຕາງໜ້າ ພະແນກການເງິນແຂວງ ( ຂະແໜງຄຸ້ມຄອງການເງິນລັດວິສາຫະກິດ ) | 1 ທ່ານ |
| - ຜູ້ຕາງໜ້າ ສະມາຊິກສະພາເຂດ | 1 ທ່ານ |
| - ຜູ້ຕາງໜ້າ ຫ້ອງການປົກຄອງແຂວງ | 1 ທ່ານ |
| - ຜູ້ຕາງໜ້າ ພະແນກຍຸຕິທຳ | 1 ທ່ານ |
| - ຜູ້ຕາງໜ້າ ປກສ ແຂວງ ( ຕຳຫຼວດເສດຖະກິດ ) | 1 ທ່ານ |
| - ຜູ້ຕາງໜ້າ ພະແນກຖະແຫຼງຂ່າວ- ວັດທະນະທຳ | 1 ທ່ານ |
| - ຜູ້ຕາງໜ້າ ແນວລາວສ້າງຊາດ | 1 ທ່ານ |

ຄະນະກຳມະການຄຸ້ມຄອງກວດກາ ການອອກເລກລາງວັນດັ່ງກ່າວ ທຸກໆຄັ້ງເມື່ອມີການອອກເລກລາງວັນ, ຄະນະກຳມະການມີໜ້າຢູ່ຫ້ອງການຕົວແທນຈຳໜ່າຍຫວຍກ່ອນເລກອອກ 1 ຊົ່ວໂມງ ການປະຕິບັດໜ້າທີ່ ກຳມະການທຸກໆຄັ້ງ ຕ້ອງມີຢ່າງໜ້ອຍ 3 ທ່ານ ຈຶ່ງສາມາດເຮັດໜ້າທີ່ໄດ້ຢ່າງສົມບູນ.

ຄະນະກຳມະການດັ່ງກ່າວມີສິດ ແລະ ໜ້າທີ່ດັ່ງນີ້ :

- ກວດກາເບິ່ງມູນຄ່າຈຳໜ່າຍຕໍ່ງວດກ່ອນແຈກຢາຍໃຫ້ບັນດາໜ່ວຍຈຳໜ່າຍວ່າຖືກຕ້ອງກັບມູນຄ່າທີ່ເຊັນສັນຍາ ກັບລັດວິສາຫະກິດຫວຍພັດທະນາ ຫລື ບໍ່.

- ການນຳສົ່ງຄືນໃບຫວຍທີ່ເຫລືອຂາຍ ຂອງຫົວໜ້າໜ່ວຍຈຳໜ່າຍຖືກຕ້ອງຄົບຖ້ວນຕາມຈຳນວນທີ່ແບ່ງປັນໃຫ້ ແລະ ຕາມເວລາທີ່ກຳນົດ ຫລື ບໍ່.

- ຕິດຕາມຟັງການຖ່າຍທອດສົດທາງວິທະຍຸກະຈາຍສຽງແຫ່ງຊາດ ຫລື ເບິ່ງຜົນອອກເລກທາງໂທລະສັບມືຖື ຫລື ອື່ນໆ.

- ເຮັດໜ້າທີ່ກວດກາຜົນການຖືກລາງວັນໂດຍກວດເບິ່ງຫົວຂັ້ວໃບຫວຍທີ່ຖືກຂາຍໃນງວດນັ້ນ ຖ້າມີຜູ້ຊື້ຖືກກໍ່ໃຫ້ເຊັນໃສ່ດ້ານຫລັງຫົວຂັ້ວນັ້ນຢ່າງໜ້ອຍ 2 ລາຍເຊັນ, ຖ້າບໍ່ມີຜູ້ຊື້ຖືກກໍໃຫ້ຂີດຂ້າຫົວຂັ້ວນໃບຫວຍດັ່ງກ່າວ.

- ສັງລວມຫົວຂັ້ວທີ່ຖືກລາງວັນທັງໝົດ ແລະ ລົງລາຍເຊັນຮັບຮອງຜົນການຖືກລາງວັນໃນແຕ່ລະຄັ້ງ.

- ຮັບຮອງຜົນການຂາຍໃບຫວຍປະຈຳງວດໄວ້ເປັນຫລັກຖານ.

- ຄະນະກຳມະການມີສິດຊັກຖາມເພີ້ມເຕີມນຳຕົວແທນຈຳໜ່າຍ ຫລື ຜູ້ຂາຍ ເພື່ອຊອກຫາລາຍລະອຽດ ກ່ຽວກັບຂໍ້ມູນຖືກລາງວັນ ຫລື ການຈຳໜ່າຍກ່ອນພິຈາລະນາເຊັນຢັ້ງຢືນ.

- ທຸກໆເດືອນໃຫ້ມີການສະຫລຸບຖອດຖອນບົດຮຽນ ແລະ ສ່ອງແສງລາຍງານໃຫ້ພະແນກການເງິນເປັນປົກກະຕິ.

2.4. ຫ້າມບໍ່ໃຫ້ຄະນະກຳມະການເຊັນຮັບຮອງການຂາຍໄດ້ ຫລື ຖືກລາງວັນເພີ້ມເຕີມຫລັງມື້ອອກເລກລາງວັນ.

2.5. ຄະນະກຳມະການຄຸ້ມຄອງກວດກາການອອກເລກລາງວັນ ຂັ້ນສູນກາງ ແລະ ຂັ້ນແຂວງ ມີກຳ

ນິດການສັບປ່ຽນພາຍໃນ 3 ປີ, ໃນກໍລະນີຄວາມຈໍາ ເປັນປ່ຽນແປງບຸກຄະລາກອນເຊັ່ນ: ຍົກຍ້າຍພະນັກງານໄປຮັບໜ້າທີ່ໃຫມ່, ໄປເຮັດວຽກທາງການ ແລະ ອື່ນໆ ໃຫ້ພາກສ່ວນກ່ຽວຂ້ອງສະເໜີ ລາຍຊື່ພະນັກງານມາປ່ຽນແທນ,ແຕ່ໃຫ້ຮັກສາຄົນເກົ່າໄວ້ 1 ຄົນ ເພື່ອສືບຕໍ່ນໍາພາໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ.

2.6.ຫົວໜ້າຕົວແທນຈໍາໜ່າຍໃບຫວຍພັດທະນາມີໜ້າທີ່ສົມທົບ ໃຫ້ຄວາມສະດວກ ແກ່ຄະນະກໍາມະການ ໄດ້ປະຕິບັດງານ, ຄິດຄ່າແຮງງານໃຫ້ແກ່ຄະນະກໍາມະການຢ່າງສົມເຫດສົມຜົນ ພ້ອມທັງ ສະເໜີຕໍ່ຄະນະກໍາມະການໄດ້ພິຈາລະນາບັນຫາຕ່າງໆ ກ່ຽວກັບການຖືກລາງວັນ ຫລື ຜົນຈໍາໜ່າຍ (ຖ້າມີ ).

3. <u>ຂອບເຂດເປົ້າໝາຍການນໍາໃຊ້</u>

ຄໍາສັ່ງແນະນໍາສະບັບນີ້ ມີຜົນນໍາໃຊ້ສະເພາະໃຫ້ແກ່ການເຄື່ອນໄຫວທຸລະກິດ ຂອງລັດວິສາຫະກິດຫວຍພັດທະນາ, ຕົວແທນຈໍາໜ່າຍ, ໜ່ວຍຈໍາໜ່າຍ ແລະ ຜູ້ຂາຍໃບຫວຍພັດທະນາ ຢູ່ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ.

ນອກຈາກເປົ້າໝາຍດັ່ງກ່າວນີ້ແລ້ວບໍ່ອະນຸຍາດໃຫ້ອົງການຈັດຕັ້ງຕ່າງໆແຕ່ຂັ້ນສູນກາງຮອດທ້ອງຖິ່ນຕະຫລອດຮອດບຸກຄົນພິມ-ຈໍາໜ່າຍໃບຫວຍ.

**III.** <u>ປະເພດໃບຫວຍພັດທະນາທີ່ອະນຸຍາດໃຫ້ພິມ- ຈໍາໜ່າຍຢູ່ ສປປລາວ.</u>

1. <u>ປະເພດໃບຫວຍພັດທະນາ ມີດັ່ງນີ້</u> :

(1)- ໃບຫວຍມູນເຊື້ອເລກ 4 ໂຕ, 5 ໂຕ.

(2)- ໃບເລກທ້າຍ-ສະຫລາກ 2 ໂຕ, 3 ໂຕ ແບບຈົກຂາຍ.

(3)- ໃບເລກແບບຈົດຂາຍ 2 ໂຕ, 3 ໂຕ.

(4)- ໃບຫວຍຂູດ.

(5)- ໃບຫວຍໂລໂຕ.

(6)- ໃບຫວຍແບບອອນລາຍ 2ໂຕ, 3ໂຕ.

(7)- ໃບຫວຍອື່ນໆ ຕາມການຕົກລົງຂອງກະຊວງການເງິນ

2. <u>ການພິມໃບຫວຍ</u>.

ກະຊວງການເງິນອະນຸຍາດໃຫ້ລັດວິສາຫະກິດ ຫວຍພັດທະນາ ເປັນຜູ້ພິມ-ຈໍາໜ່າຍ ໃບຫວຍທຸກປະເພດ ເປັນເອກະພາບໃນຂອບເຂດທົ່ວປະເທດ.

3. <u>ຫລັກການຂາຍໃບຫວຍ</u>.

ການກໍານົດລາຄາຂາຍໃບຫວຍ, ມູນຄ່າລາງວັນ ແລະ ອັດຕາເປີເຊັນຈາກການຂາຍໃບຫວຍ ແມ່ນລັດຖະມົນຕີ ວ່າການກະຊວງການເງິນ ເປັນຜູ້ກໍານົດອອກໃນແຕ່ລະໄລຍະ.

ຂະແໜງສ່ວຍສາອາກອນເປັນຜູ້ຄຸ້ມຄອງ ແລະ ເກັບພັນທະຕ່າງໆຈາກກິດຈະການຫວຍພັດທະນາຕາມກົດໝາຍສ່ວຍສາອາກອນ ແລະ ຄໍາສັ່ງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 2073/ກງ, ລົງວັນທີ 30/09/2004 ກ່ຽວກັບການປະຕິບັດພັນທະອາກອນ, ເງິນປັນຜົນຂອງລັດວິສາຫະກິດຫວຍພັດທະນາ, ບັນດາຕົວແທນ ແລະ ຜູ້ຂາຍຍ່ອຍໃບຫວຍພັດທະນາທົ່ວປະເທດ ແລະ ຫ້າມຈໍາໜ່າຍຫວຍນອກລະ ບົບທີ່ບໍ່ໄດ້ຮັບອະນຸຍາດຈາກກະຊວງການເງິນ.

4. <u>ການຈໍາໜ່າຍໃບຫວຍ</u>

ການດໍາເນີນກິດຈະການຫວຍ ແມ່ນມີຈຸດປະສົງເພື່ອລະດົມທຶນຈາກສັງຄົມເຂົ້າໃນການພັດທະນາປະເທດຊາດ ດ້ວຍການສ້າງບັນຍາກາດ ໃຫ້ປະຊາຊົນໄດ້ສ່ຽງໂຊກຊິງລາງວັນ ແລະ ອີກດ້ານໜຶ່ງກໍເພື່ອຈໍາກັດການພະນັນຕ່າງໆ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ໂດຍນໍາໃຊ້ຫລາຍພາກສ່ວນເສດຖະກິດພາຍ

ໃນປະເທດເຂົ້າຮ່ວມໃນການຮັບໄປຈຳໜ່າຍຢ່າງຂາດຕົວ ແລະ ປະຕິບັດຕາມລະບຽບກົດໝາຍ.

5. ການກຳນົດລາງວັນໃນໃບຫວຍ.

ໃບຫວຍແຕ່ລະປະເພດ ຕ້ອງກຳນົດມູນຄ່າລາງວັນໃຫ້ຈະແຈ້ງ, ຖືກຕ້ອງຕາມການກຳນົດ ຂອງລັດຖະມົນຕີວ່າການກະຊວງການເງິນ ແລະ ມອບໃຫ້ລັດວິສາຫະກິດຫວຍພັດທະນາຈັດແບ່ງໂຄງປະກອບລາງວັນແຕ່ລະປະເພດໃຫ້ເໝາະສົມ, ລາງວັນເປັນວັດຖຸບໍ່ສາມາດເບີກຈ່າຍເປັນເງິນໄດ້ ແລະ ຖ້າກາຍກຳນົດຮັບລາງວັນຖືວ່າສະຫລະສິດ.

6. ການຂາຍໃບຫວຍ.

ໃບຫວຍແຕ່ລະປະເພດຕ້ອງຂາຍຕາມຈຳນວນ ແລະ ມູນຄ່າທີ່ໄດ້ອະນຸມັດຢ່າງຖືກຕ້ອງ ໂດຍມອບໃຫ້ຕົວແທນຈຳໜ່າຍຫວຍພັດທະນາຢູ່ແຂວງ, ນະຄອນຫລວງວຽງຈັນ ເປັນຜູ້ທີ່ໄດ້ຮັບສິດ ດຳເນີນກິດຈະການຫວຍ ແລະ ຕ້ອງໄດ້ໃຫ້ບູລິມະສິດແກ່ນັກຮົບເກົ່າ, ພະນັກງານບຳນານ, ຜູ້ເສຍອົງຄະ ແລະ ຜູ້ດ້ອຍໂອກາດໃຫ້ເປັນຜູ້ຂາຍໃບຫວຍ ( ຜູ້ຂາຍຍ່ອຍ ຫລື ເປັນໜ່ວຍຈຳໜ່າຍ ) ເພື່ອຮັບເອົາໃບຫວຍນຳຕົວແທນຈຳໜ່າຍໄປຂາຍ ຕາມລະບຽບການ.

7. ການສົ່ງໃບຫວຍ.

ໃບຫວຍແຕ່ລະປະເພດທີ່ຕົວແທນຈຳໜ່າຍປະຈຳແຂວງ, ນະຄອນຫລວງຮັບໄປຈຳໜ່າຍຕ້ອງໄດ້ມີການກວດກາຈຳນວນຫົວ, ຈຳນວນໃບ, ລະຫັດ,ເລກລຳດັບ ແລະເຕັກນິກອື່ນໆໃຫ້ຖືກຕ້ອງຕາມລະບຽບການ.

ໃບຫວຍທີ່ຕົວແທນຈຳໜ່າຍສົ່ງອອກໄປຂາຍແຕ່ລະປະເພດທີ່ຂາຍບໍ່ໝົດ ( ເຫລືອຂາຍ ) ຜູ້ຂາຍຕ້ອງສົ່ງຄືນ ໃຫ້ຕົວແທນຈຳໜ່າຍຫວຍພັດທະນາຢູ່ແຂວງ, ນະຄອນຫລວງວຽງຈັນ ໃຫ້ສຳເລັດກ່ອນເວລາອອກເລກລາງວັນ, ໃນແຕ່ລະຄັ້ງຕ້ອງກວດກາ ແລະ ບັນທຶກຜົນການກວດກາ ຂອງຄະນະກຳມະການຄຸ້ມຄອງການອອກເລກລາງວັນເຊັນຢັ້ງຢືນ.

8. ໃບຫວຍທີ່ຖືກເກືອດຫ້າມ.

ຫ້າມບໍ່ໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນ ກັບລັດຖະບານ, ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຫົວໜ່ວຍທຸລະກິດ, ບຸກຄົນ ແລະ ທຸກພາກສ່ວນກ່ຽວຂ້ອງເປັນຜູ້ພິມ ແລະ ຈຳໜ່າຍໃບຫວຍທຸກປະເພດດ້ວຍຕົນເອງ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງການເງິນ.

## IV. ການອອກຫວຍ ແລະ ການມອບລາງວັນ

1. ການອອກຫວຍ.

ກະຊວງການເງິນອະນຸຍາດໃຫ້ລັດວິສາຫະກິດ ຫວຍພັດທະນາ ເປັນຜູ້ຈັດຕັ້ງການອອກເລກລາງວັນຫວຍແຕ່ລະປະເພດລວມສູນຢູ່ບ່ອນດຽວ ແລະ ມີຜົນນຳໃຊ້ເປັນເອກະພາບໃນທົ່ວປະເທດ.

2. ການກຳນົດວັນອອກຫວຍ ແຕ່ລະປະເພດມີດັ່ງນີ້:

(1)- ຫວຍມູນເຊື້ອເລກ 4 ໂຕ, 5 ໂຕ ແລະ ໃບ ເລກທ້າຍ 2 ໂຕ, 3 ໂຕ ອອກ 2 ຄັ້ງຕໍ່ເດືອນ.

(2)- ໃບເລກສະຫລາກ 2 ໂຕ, 3 ໂຕ, ຫວຍ ເລກ 5 ໂຕ ອອກ 1 ຄັ້ງຕໍ່ເດືອນ.

(3)- ເລກແບບຈົດຂາຍ 2 ໂຕ, 3 ໂຕ ອອກທຸກວັນພະຫັດ ຂອງແຕ່ລະເດືອນ .

(4)- ຫວຍອອນລາຍ 2 ໂຕ, 3 ໂຕ ກຳນົດເອົາຜົນອອກເລກລາງວັນເລກທ້າຍ 2 ໂຕ , 3 ໂຕຂອງລາງວັນທີ 1 ໃນແຕ່ລະຄັ້ງຂອງຂໍ້ (1),(2),(3) ຂ້າງເທິງ.

(5)- ວັນອອກຫວຍໂລໂຕອອກ 2 ຄັ້ງຕໍ່ເດືອນ.

(6)- ຫວຍຂູດແມ່ນໄດ້ກຳນົດລາງວັນໄວ້ໃນ ໃບຫວຍແລ້ວ ( ບໍ່ໄດ້ມີການອອກເລກລາງວັນ, ຜູ້ສ່ຽງໂຊກສາມາດຂູດຊອກຫາລາງວັນໄດ້ເອົາເອງໂລດໃນ ໃບຫວຍຕາມບ່ອນກຳນົດໃຫ້ຂູດໃນເວລາຊື້ ).

(7)- ຫວຍອື່ນໆທີ່ໄດ້ຮັບອະນຸຍາດແມ່ນໃຫ້ສັບຊ້ອນອອກເລກລາງວັນຕາມທີ່ໄດ້ກຳນົດ.

3. ການກຳນົດເວລາຮັບລາງວັນ.

ໃຫ້ລັດວິສາຫະກິດ ຫວຍພັດທະນາ, ຕົວແທນຈຳໜ່າຍ ຈັດຕັ້ງການຈ່າຍລາງວັນ ຮອດມືຜູ້ຖືກເລກລາງວັນ ນັບແຕ່ມື້ທີ່ໄດ້ແຈ້ງຜົນການອອກເລກລາງວັນເປັນຕົ້ນໄປ. ໃບຫວຍແຕ່ລະປະເພດ ມີກຳນົດຮັບລາງວັນດັ່ງນີ້ :

(1)- ຫວຍມູນເຊື້ອເລກ 4 ໂຕ, 5 ໂຕ , ຫວຍໂລໂຕ ມີກຳນົດຮັບລາງວັນ 30 ວັນ.

(2)- ເລກທ້າຍ - ສະຫລາກ 2 ໂຕ, 3 ໂຕ, ເລກແບບຈົດຂາຍ 2 ໂຕ, 3 ໂຕ, ຫວຍອອນລາຍ 2 ໂຕ, 3ໂຕ ມີກຳນົດຮັບລາງວັນ 10 ວັນ.

4. ເງື່ອນໄຂການຮັບລາງວັນ.

ຜູ້ຖືກລາງວັນຕ້ອງມີໃບຫວຍທີ່ຖືກລາງວັນ, ໃບຫວຍຕ້ອງຢູ່ໃນສະພາບເດີມ, ບໍ່ມີຮອຍລຶບ, ຂີດຂ້າ, ໃບຫວຍ 1 ໃບຮັບລາງວັນໄດ້ລາງວັນດຽວເທົ່ານັ້ນ.

5. ເງິນລາງວັນຄ້າງຈ່າຍ

ເງິນລາງວັນຄ້າງຈ່າຍພາຍຫຼັງທີ່ໄດ້ມີການໄລ່ລຽງ ແລະ ເຊັນບົດບັນທຶກ ລະຫວ່າງ ລັດວິສາຫະກິດຫວຍພັດທະນາ ກັບ ບັນດາຕົວແທນຈຳໜ່າຍຫວຍພັດທະນາໃນທົ່ວປະເທດ ໃຫ້ປະຕິບັດດັ່ງນີ້:

ເງິນລາງວັນຄ້າງຈ່າຍທັງໝົດ ທີ່ມີການບັນທຶກໄລ່ລຽງຮ່ວມກັນແຕ່ລະຄັ້ງ ໃຫ້ຫັກທົດແທນຄືນຄ່າໃຊ້ຈ່າຍແກ່ລັດວິສາຫະກິດ ຫວຍພັດທະນາ ໃນລະດັບບໍ່ເກີນເຄິ່ງໜຶ່ງຂອງຈຳນວນເງິນທີ່ຄ້າງຈ່າຍທັງໝົດ ສ່ວນທີ່ເຫລືອໃຫ້ມອບເຂົ້າງົບປະມານແຂວງ, ນະຄອນຫລວງ.

V. ມາດຖານ, ເງື່ອນໄຂຂອງຕົວແທນຈຳໜ່າຍ,ໜ່ວຍຈຳໜ່າຍ ແລະ ຜູ້ຂາຍໃບຫວຍ.

ກ. ຕົວແທນຈຳໜ່າຍ

1- ມີເງື່ອນໄຂດ້ານຕະຫລາດຈຳໜ່າຍໃບຫວຍທີ່ເໝາະສົມໃຫ້ແກ່ການສ້າງຕັ້ງຕົວແທນຈຳໜ່າຍໄດ້.

2- ຜູ້ສະເໜີຂໍເປັນຕົວແທນຈຳໜ່າຍຈະຕ້ອງເປັນບຸກຄົນທີ່ມີສຸຂະພາບແຂງແຮງດີ, ບໍ່ມີພະຍາດຕິດແປດ, ຄຸນສົມບັດດີ, ມີຄວາມຊື່ສັດສຸດຈະລິດ, ເຄົາລົບນັບຖືການຈັດຕັ້ງ, ເຫັນດີປະຕິບັດຕາມຂໍ້ກຳນົດກົດລະບຽບຂອງລັດວິສາຫະກິດ ຫວຍພັດທະນາວາງອອກ, ໄດ້ຮັບຄວາມເຫັນພ້ອມຈາກອຳນາດການປົກຄອງທ້ອງຖິ່ນຂັ້ນແຂວງ ແລະ ຄຳເຫັນດີຂອງກະຊວງການເງິນ.

3- ເປັນຜູ້ມີລະດັບການສຶກສາຈົບມັດທະຍົມຕອນປາຍ ແລະ ມີໃບຢັ້ງຢືນວິຊາສະເພາະການເງິນ ຫຼື ການບັນຊີ ( ຊັ້ນກາງ ) ຂຶ້ນໄປ, ກໍລະນີຫາກມີປະສົບການກ່ຽວກັບການເຮັດວຽກງານ ຫວຍພັດທະນາຍິ່ງເປັນການດີ.

4- ມີຄວາມສາມາດຈັດຫາສະຖານທີ່ເຮັດວຽກ, ມີເຄື່ອງມື ແລະ ອຸປະກອນຮັບໃຊ້ໃຫ້ແກ່ການດຳເນີນທຸລະກິດທີ່ເປັນຂອງຕົນເອງ.

5- ມີທຶນເປັນຂອງຕົນເອງເພື່ອຮອງຮັບການຊຳລະຄ່າມອບເໝົາ ຊື້ຍົກຂາດຕົວ ໃບຫວຍພັດທະນາໃນແຕ່ລະຄັ້ງ,ເງິນຄ່າຂົນສົ່ງ, ເງິນຄ້ຳປະກັນສັນຍາ ເທົ່າກັບ 1,5 % ຂອງມູນຄ່າ ຮັບໄປຈຳໜ່າຍ, ເງິນຄ້ຳປະກັນລາງວັນເທົ່າກັບ 10% ຂອງມູນຄ່າລາງວັນຕໍ່ຄັ້ງດ້ວຍເງິນສົດ ຫລື ໜັງສືຄ້ຳປະກັນທະນາຄານ ຕາມອາຍຸສັນຍາ ແລະ ມີຄວາມຮັບຜິດຊອບດ້ວຍຕົນເອງທາງດ້ານລາຍຮັບ - ລາຍຈ່າຍ ແລະ ກຳໄລ - ຂາດທຶນ.

6- ມີຄວາມສາມາດ ແລະ ຮັບຜິດຊອບໃນການຄຸ້ມຄອງ ແລະ ບໍລິຫານວຽກງານຫວຍພັດທະນາ ແຕ່ລະປະເພດດ້ວຍຕົນເອງບໍ່ອະນຸຍາດໃຫ້ເອົາໃບແຕ່ງຕັ້ງຂອງຕົນໃຫ້ຜູ້ອື່ນເຄື່ອນໄຫວ.

ຂ. ໜ່ວຍຈໍາໜ່າຍ.

1- ເປັນບຸກຄົນທີ່ມີສຸຂະພາບແຂງແຮງດີ, ບໍ່ມີພະຍາດຕິດແປດ, ຄຸນສົມບັດດີ, ມີຄວາມສັດຊື່ ບໍລິສຸດ, ເຄົາລົບນັບຖືການຈັດຕັ້ງ, ປະຕິບັດຂໍ້ກໍານົດ, ກົດລະບຽບທີ່ລັດວິສາຫະກິດຫວຍພັດທະນາວາງອອກ.

2- ມີລະດັບການສຶກສາຈົບມັດທະຍົມຕອນຕົ້ນ ແລະ ມີໃບຢັ້ງຢືນ ວິຊາສະເພາະການເງິນ - ບັນຊີ ຊັ້ນຕົ້ນຂຶ້ນໄປ, ຖ້າມີປະສົບການກ່ຽວກັບການວຽກງານຫວຍພັດທະນາຍິ່ງເປັນການດີ.

3- ມີສະຖານທີ່ເຮັດວຽກ, ມີເຄື່ອງມື ແລະ ອຸປະກອນຮັບໃຊ້ໃຫ້ແກ່ການດໍາເນີນທຸລະກິດ.

4- ມີເງິນຄໍ້າປະກັນໄວ້ກັບຕົວແທນຈໍາໜ່າຍ

4.1 ສໍາລັບໜ່ວຍຈໍາໜ່າຍ ທີ່ໄດ້ຮັບຄ່າຕອບແທນຈາກຕົວແທນຈໍາໜ່າຍ ເປັນເປີເຊັນການຂາຍ ໃຫ້ຄໍ້າປະກັນເປັນເງິນໃນອັດຕາສູງສຸດ 1,5% ຂອງມູນຄ່າທີ່ຮັບໄປຈໍາໜ່າຍທັງໝົດໃນແຕ່ລະຄັ້ງ.

4.2 ສໍາລັບໜ່ວຍຈໍາໜ່າຍທີ່ຊື້ຮັບເໝົາຂາດຕົວຈາກຕົວແທນຈໍາໜ່າຍໃຫ້ຄໍ້າປະກັນສັນຍາ ເປັນເງິນ ໃນອັດຕາ 0,75% ຂອງມູນຄ່າຮັບໄປຈໍາໜ່າຍຕໍ່ຄັ້ງ ແລະ ເງິນຄໍ້າປະກັນລາງວັນສູງສຸດ 5% ຂອງມູນຄ່າ ລາງວັນຕໍ່ຄັ້ງ.

5- ມີຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ບໍລິຫານວຽກງານຫວຍພັດທະນາແຕ່ລະປະເພດ ດ້ວຍຕົນເອງ.

ຄ. ຜູ້ຂາຍຫວຍພັດທະນາ.

1. ແມ່ນຜູ້ທີ່ມີສັນຊາດລາວ, ມີອາຍຸກະສຽນແຕ່ 15 ປີ ຂຶ້ນໄປໂດຍບໍ່ຈໍາແນກເພດ.

2. ມີສຸຂະພາບແຂງແຮງ, ບໍ່ເປັນພະຍາດຕິດແປດ, ຄຸນສົມບັດດີ, ມີຄວາມຊື່ສັດ - ບໍລິສຸດ, ເຄົາລົບ ນັບຖືການຈັດຕັ້ງ, ປະຕິບັດຕາມຂໍ້ກໍານົດ, ລະບຽບການທີ່ລັດວິສາຫະກິດຫວຍພັດທະນາລວມທັງກົດໝາຍ ຢ່າງຖືກຕ້ອງ.

3. ມີລະດັບການສຶກສາຈົບປະຖົມຂຶ້ນໄປ.

4. ມີເຄື່ອງມືຮັບໃຊ້ເພື່ອປະກອບໃຫ້ແກ່ການຂາຍຫວຍພັດທະນາເຊັ່ນ: ພາຫະນະ,ໂຕະຕັ່ງ, ບິກ, ກາຈໍ້ຊື່ຜູ້ຂາຍ, ເຄື່ອງໜີບເຈ້ຍ ແລະ ອື່ນໆ.

5. ເອົາໃຈໃສ່ປະຕິບັດລະດັບຄາດໝາຍສູ້ຊົນທີ່ຕົວແທນຈໍາໜ່າຍກໍານົດອອກ.

6. ເອົາໃຈໃສ່ໂຄສະນາຊວນເຊື່ອຜູ້ມັກຊ່ຽງໂຊກຊີງລາງວັນໄດ້ດີ.

7. ມີລະຫັດຂາຍຫວຍທີ່ຕົວແທນຈໍາໜ່າຍອອກໃຫ້ເພື່ອອອກກາປະທັບຂາຍໃບຫວຍພັດທະນາ.

8. ມີຄວາມສາມາດຂາຍໃບຫວຍພັດທະນາທຸກປະເພດດ້ວຍຕົນເອງ ແລະ ບໍ່ອະນຸຍາດໃຫ້ບຸກຄົນ ອື່ນຂາຍປ່ຽນແທນ, ຢຸດເຊົາ ແລະ ການໂອນສິດໃຫ້ຄົນອື່ນຂາຍຕາມພາລະການແຕ່ຝ່າຍດຽວຢ່າງເດັດຂາດ.

## VI. ການກວດກາກິດຈະການຫວຍ.

ກະຊວງການເງິນ, ລັດວິສາຫະກິດຫວຍພັດທະນາ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍສົມທົບກັບອໍາ ນາດການປົກຄອງທ້ອງຖິ່ນ ມີໜ້າທີ່ກວດກາຈໍາກັດການອອກເລກລາງວັນ, ການພິມ- ຈໍາໜ່າຍຫວຍນອກລະ ບົບ ທີ່ບໍ່ໄດ້ຮັບອະນຸຍາດຈາກກະຊວງການເງິນ.

ເພື່ອຮັບປະກັນຄວາມຖືກຕ້ອງຕາມລະບຽບການ ແລະ ຄວາມຖືກຕ້ອງຕາມຄວາມຈິງ, ກິດຈະການ

ຫວຍພັດທະນາ ຈະຕ້ອງຜ່ານການກວດກາໂດຍເຈົ້າໜ້າທີ່ ທີ່ກ່ຽວຂ້ອງຕາມລະບຽບກົດໝາຍຂອງລັດ.

**VII. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**1. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

- ອົງການຈັດຕັ້ງຕ່າງໆ, ນິຕິບຸກຄົນ ຫລື ບຸກຄົນ ທີ່ປະຕິບັດຄໍາສັ່ງແນະນໍາສະບັບນີ້ເປັນຕົ້ນ : ໄດ້ສະໜອງຂໍ້ມູນຂ່າວສານລາຍງານຕໍ່ເຈົ້າໜ້າທີ່ ຫຼື ອໍານາດການປົກຄອງໄດ້ຊາບກ່ຽວກັບ: ການຈໍາໜ່າຍຫວຍນອກລະບົບ ຫຼື ທໍາການພິມໃບຫວຍໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ ປະກອບເປັນຂໍ້ມູນຫຼັກຖານສາມາດດໍາເນີນຄະດີຕໍ່ຜູ້ກະທໍາຜິດ ແມ່ນໄດ້ຮັບໃບຍ້ອງຍໍຈາກພະແນກການເງິນປະຈໍາແຂວງ ຫຼື ຫ້ອງການການເງິນເມືອງຢ່າງສົມກຽດ ພ້ອມທັງຈະໄດ້ຮັບເງິນບໍາເນັດຈາກເງິນທີ່ປັບໃໝຕາມຄວາມເໝາະສົມຄື :

+ ໄດ້ຮັບບໍາເນັດໃນອັດຕາ 30% ( ສາມສິບສ່ວນຮ້ອຍ) ຂອງ ມູນຄ່າປັບໃໝແຕ່ລະຄັ້ງ ໃຫ້ແກ່ຜູ້ບອກຂ່າວລາຍງານ.

+ ຍັງອີກຄ່າປັບໃໝ70%ຕໍ່ຄັ້ງມອບໃຫ້ການຈັດຕັ້ງ,ການປົກຄອງທ້ອງຖິ່ນທີ່ກວດກາແລະດໍາເນີນຄະດີຕໍ່ຜູ້ທີ່ລະເມີດລະບຽບການ ເພື່ອໃຊ້ຈ່າຍເຂົ້າໃນການເຄື່ອນໄຫວວຽກງານດັ່ງກ່າວ.

**2. ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງໃດຫາກລະເມີດຄໍາສັ່ງແນະນໍາສະບັບນີ້ຈະຖືກລົງໂທດດ້ວຍວິທີການສຶກສາອົບຮົມ, ຕັກເຕືອນ, ປັບໃໝ ຫຼື ດໍາເນີນຄະດີ ຕາມກົດໝາຍແລ້ວແຕ່ກໍລະນີ.

**3. ມາດຕະການກ່າວເຕືອນ.**

- ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງຫາກລະເມີດຄໍາສັ່ງແນະນໍາສະບັບນີ້ ແມ່ນຈະຖືກປະຕິບັດດັ່ງນີ້ :

**ລະເມີດຄັ້ງທີ 1**: ສຶກສາອົບຮົມ, ຕັກເຕືອນໃຫ້ຢຸດເຊົາການເຄື່ອນໄຫວພິມຈໍາໜ່າຍໃບຫວຍທີ່ບໍ່ໄດ້ຮັບໃບອະນຸຍາດພ້ອມທັງເຊັນບັນທຶກໄວ້ເປັນຫຼັກຖານ.

**ລະເມີດຄັ້ງທີ 2** : ການຈັດຕັ້ງ, ນິຕິບຸກຄົນ ຫຼື ບຸກຄົນຫາກຍັງສືບຕໍ່ເຄື່ອນໄຫວ ແມ່ນຖືກຕັກເຕືອນການກະທໍາຜິດ ພ້ອມທັງປັບໃໝ.

**4. ມາດຕະການປັບໃໝ.**

* ການຈັດຕັ້ງ, ນິຕິບຸກຄົນ ຫຼືບຸກຄົນຜູ້ລະເມີດວຽກງານການພິມ- ຈໍາໜ່າຍໃບຫວຍຈະຖືກປັບໃໝດັ່ງນີ້ :

- ພາຍຫຼັງທີ່ຖືກກ່າວເຕືອນ 1 ຄັ້ງແລ້ວ ແຕ່ຍັງສືບຕໍ່ລະເມີດ ການຈັດຕັ້ງ, ນິຕິບຸກຄົນ ຫຼືບຸກຄົນທີ່ລະເມີດກ່ຽວກັບການພິມ-ຈໍາໜ່າຍໃບຫວຍ ຈະຖືກປັບໃໝ 50% ຂອງມູນຄ່າພິມ- ຈໍາໜ່າຍທີ່ກວດກາເຫັນ.

- ໃນກໍລະນີທີ່ໄດ້ຖືກປັບໃໝ 1 ຄັ້ງແລ້ວ ແຕ່ຍັງສືບຕໍ່ລະເມີດແມ່ນຈະຖືກປັບໃໝຄັ້ງທີ 2 ເທົ່າກັບ 100% ຂອງມູນຄ່າພິມ- ຈໍາ ໜ່າຍໃບຫວຍ ທີ່ກວດກາເຫັນ.

- ໃນກໍລະນີຍັງສືບຕໍ່ກະທໍາຜິດອີກຄັ້ງໃໝ່ຈະຖືກປັບໃໝເພີ້ມຂຶ້ນຈາກລະດັບເກົ່າ 50% ຂອງມູນຄ່າພິມຈໍາໜ່າຍໃບຫວຍທີ່ບໍ່ຖືກຕ້ອງ, ພ້ອມທັງໃຫ້ເຈົ້າໜ້າທີ່ກ່ຽວຂ້ອງດໍາເນີນຄະດີຕໍ່ຜູ້ກ່ຽວຕາມກົດໝາຍຂອງ ສປປລາວ.

**VIII. ບົດບັນຍັດສຸດທ້າຍ**

1. ການຈັດຕັ້ງປະຕິບັດ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຄຳສັ່ງແນະນຳກ່ຽວກັບການຄຸ້ມຄອງກິດຈະການຫວຍຢ່າງເຂັ້ມງວດ.

-ຄຳສັ່ງແນະນຳສະບັບນີ້ ປ່ຽນແທນ ຂໍ້ຕົກລົງຕ່າງໆ ທີ່ນຳໃຊ້ຜ່ານມາມີເນື້ອໃນຂັດກັບສະບັບນີ້ .

2. ຜົນນຳໃຊ້.

ຄຳສັ່ງແນະນຳສະບັບນີ້ມີຜົນໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ

ສົມດີ ດວງດີ